**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 214013,
ແຟກ: 021 213495

ເລກທີ: 4969 /ກອຢ
ນະຄອນຫລວງວຽງຈັນ, ວັນທີ: 10 JUL 2023

# ໜັງສືແຈ້ງການ

**ເຖິງ:** - ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ;
- ຫ້ອງການສາທາລະນະສຸກນະຄອນ, ເມືອງ;
- ບັນດາອົງການຈັດຕັ້ງພາກລັດ;
- ບັນດາຜູ້ປະກອບການທຸລະກິດດ້ານອາຫານ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການນຳສົ່ງຕົວຢ່າງ, ການນຳໃຊ້ໃບຢັ້ງຢືນຜົນວິໄຈ ແລະ ການຂຶ້ນ-ຕໍ່ທະບຽນອາຫານ.

- ອີງຕາມ ກົດໝາຍວ່າດ້ວຍອາຫານ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ບົດບັນທຶກກອງປະຊຸມ ປຶກສາຫາລື ກ່ຽວກັບວຽກງານວິໄຈ, ຂຶ້ນ-ຕໍ່ທະບຽນອາຫານ ແລະ ນ້ຳດື່ມ ຄັ້ງວັນທີ 18 ພຶດສະພາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ຕົກລົງເຫັນດີຂອງກົມອາຫານ ແລະ ຢາ.

ເພື່ອເຮັດໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດກ່ຽວກັບ ການນຳສົ່ງຕົວຢ່າງ, ການນຳໃຊ້ໃບຢັ້ງຢືນຜົນການວິໄຈ ແລະ ການຂຶ້ນ-ຕໍ່ທະບຽນອາຫານ ແລະ ນ້ຳດື່ມ ແລະ ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການທຸລະກິດອາຫານ ແລະ ນ້ຳດື່ມ ກົມອາຫານ ແລະ ຢາ ຈຶ່ງໄດ້ອອກແຈ້ງການ ດັ່ງນີ້:

1. ໃບນຳສົ່ງວິໄຈອາຫານ, ນ້ຳດື່ມ ຈາກແຂວງ, ນະຄອນຫຼວງ ແມ່ນສົ່ງຫາສູນວິໄຈອາຫານ ແລະ ຢາ ແຫ່ງຊາດ ແລະ ສຳເນົາ 1 ສະບັບ ໃຫ້ສົ່ງ ກົມອາຫານ ແລະ ຢາ ເພື່ອຕິດຕາມ, ກໍລະນີອາຫານຊະນິດໃດຍັງບໍ່ມີມາດຕະຖານລາຍການວິໄຈແມ່ນນຳສົ່ງກົມອາຫານ ແລະ ຢາ ຕາມປົກກະຕິ ເພື່ອກຳນົດລາຍການກວດກາວິໄຈເປັນການແນະນຳແກ່ສູນວິໄຈອາຫານ ແລະ ຢາ ໃນການປະຕິບັດ.
2. ໃຫ້ນຳໃຊ້ໃບຢັ້ງຢືນຜົນການວິໄຈຂອງສູນວິໄຈອາຫານ ແລະ ຢາແຫ່ງຊາດ ປ່ຽນແທນໃບກວດກາຄຸນະພາບຂອງກົມອາຫານ ແລະ ຢາ;
3. ເອກະສານຂຶ້ນ-ຕໍ່ທະບຽນອາຫານ, ນ້ຳດື່ມຢູ່ນະຄອນຫຼວງແມ່ນມອບໃຫ້ຂະແໜງອາຫານ ແລະ ຢາ ນະຄອນຫຼວງ ກວດກາແລ້ວສົ່ງໃຫ້ກົມອາຫານ ແລະ ຢາ ເພື່ອພິຈາລະນາຂຶ້ນ ຫຼື ຕໍ່ທະບຽນ ອຢ;

4. ສູນວິໄຈອາຫານ ແລະ ຢາແຫ່ງຊາດ ເປັນຜູ້ສະຫຼຸບສັງລວມ ຂໍ້ມູນສະຖິຕິ ການນໍາສົ່ງວິໄຈ, ຜົນການວິໄຈ ລາຍການທີ່ຜ່ານ, ວິໄຈບໍ່ຜ່ານ ປະຈໍາເດືອນ ສົ່ງໃຫ້ກົມອາຫານ ແລະ ຢາ;
5. ກົມອາຫານ ແລະ ຢາ ປະສານສົມທົບ ສູນວິໄຈອາຫານ ແລະ ຢາ, ກອງກວດກາອາຫານ ແລະ ຢາ ແລະ ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ສືບຕໍ່ຄົ້ນຄວ້າສ້າງ-ປັບປຸງ ມາດຕະຖານອາຫານລາຍການ ວິໄຈ ແລະ ຄູ່ມືແນະນໍາໃນການປັບປຸງແກ້ໄຂກໍລະນີຜົນວິໄຈບໍ່ບັນລຸມາດຕະຖານຕາມລາຍການວິໄຈຂອງ ອາຫານ ແລະ ປະເມີນການຈັດຕັ້ງປະຕິບັດ ແຕ່ລະໄລຍະ ເພື່ອປັບປຸງແກ້ໄຂ ໃຫ້ເໝາະສົມ ຕາມລະບຽບກົດ ໝາຍ ແລະ ທັນກັບເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອພິຈາລະນາ ແລະ ປະຕິບັດຕາມລະບຽບການດ້ວຍ.

**ຫົວໜ້າກົມ**

ປອ. ດຣ. ບຸນຊູ ແກ້ວຫາວົງ